# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 20 ກັນຍາ 2020 (09-20-2020)

## ໃຫ້ກຽດພໍ່ແມ່

*ຄວາມຊົງຈຳທີ່ທ່ານມັກທີ່ສຸດຕໍ່ພໍ່ແມ່ຄົນນຶ່ງແມ່ນຫຍັງ?*

**ຈຸດສຳຄັນໃນບົດຮຽນ:** ການໃຫ້ກຽດພໍ່ແມ່ເຫັນໄດ້ຈາກຄຳເວົ້າແລະການກະທຳຂອງທ່ານ.
**ພຣະຄັມພີຕອບສນອງຕໍ່ຊີວິດ:** ພໍ່ແລະແມ່ຂອງຂ້າພະເຈົ້າໄດ້ບອກແຈ້ງຕລອດເວລາຂ້າພະເຈົ້າໃຫຍ່ຂຶ້ນວ່າຖ້າຂ້າພະເຈົ້າເຮັດຫຍັງຜິດຢູ່ໂຮງຮຽນກໍຈະມີການລົງໂທດຢູ່ເຮືອນ. ໂດຍສະເພາະພໍ່ຂອງຂ້າພະເຈົ້າ ເພິ່ນບໍ່ໄດ້ໂຍະຍານໃຫ້ເວລາເຮົາຝ່າຝືນກົດຣະບຽບທີ່ໂຮງຮຽນຫຼືທີ່ອື່ນໆ. ຄວາມຈິງ, ພໍ່ຂອງຂ້າພະເຈົ້າຈັດການໃນວັນເສົາຕອນຂ້າພະເຈົ້າຍັງໜຸ່ມ: ແຕ່ຂ້າພະເຈົ້າຍ່າງເຂົ້າປະຕູໜ້າບ້ານ, ເພິ່ນກໍຈະເວົ້າວ່າ, "ຕອນເຈົ້າຢູ່ທີ່ນັ້ນຄືນນີ້, ຈົ່ງຈຳໄວ້ວ່ານາມສະກຸນຂອງເຈົ້າແມ່ນ ອີແວນ(Evans)ເດີ. ເປັນທີ່ປາກົດແຈ້ງແລ້ວວ່າຂ້າພະເຈົ້າຮູ້ຊື່ຂ້າພະເຈົ້າດີ; ເພິ່ນບໍ່ຈຳເປັນຢ້ຳເຕືອນຂ້າພະເຈົ້າດອກ. ແຕ່ເພິ່ນເຕືອນຂ້າພະເຈົ້າວ່າ ຊື່ຂ້າພະເຈົ້າເປັນຕົວແທນສິ່ງທີ່ໃຫຍ່ກວ່າຂ້າພະເຈົ້າ. ນາມສະກຸນຂອງພວກເຮົາບົ່ງບອກເຖິງຄວາມສັດຊື່, ຄວາມໝັ້ນຄົງ, ສິລທັມ, ຄວາມສັດຊື່ໃນຊຸມຊົນ. ເວົ້າຈົ້ງໆ, ມັນເປັນຕົວແທນຄຳໝັ້ນສັນຍາໃນການດຳເນີນຊີວິດຄຣິສຕຽນຂອງເຮົາແລະພໍ່ຂອງຂ້າພະເຈົ້າບໍ່ຢາກໃຫ້ຂ້າພະເຈົ້າເຮັດເສື່ອມເສັຽຕໍ່ການເປັນພະຍານຂອງຊື່ນັ້ນ.

ຄຳເຕືອນນັ້ນຝັງຢູ່ໃນຫົວຂອງຂ້າພະເຈົ້າສເມີເມື່ອໃດຂ້າພະເຈົ້າຕັດສິນໃຈເຮັດຫຍັງລົງໄປຕາມຄວາມຄະນອງ. ຂ້າພະເຈົ້າສົມຄວນໃຫ້ກຽດພໍ່ຂອງຂ້າພະເຈົ້າ ແລະຄຸນຄ່າທີ່ເພິ່ນສອນຂ້າພະເຈົ້າໃຫ້ໃສ່ໃຈຊື່ສຽງຂອງພວກເຮົາ. ຂ້າພະເຈົ້າຢາກໃຫ້ກຽດຊື່ທີ່ເພິ່ນຕັ້ງໃຫ້ຂ້າພະເຈົ້າມາ.
**ພຣະຄັມພີກ່າວວ່າແນວໃດ :** ອົພຍົບ 20:12, 2 ຊາມູເອນ 7-14 (ເບິ່ງຕາມຂໍ້ 1, 2, ແລະ 3)

### ການສຶກສາພຣະຄັມພີ

**1. <u>ອົພຍົບ 20:12</u>.**
*12 ຈົ່ງນັບຖືບິດາມາດາຂອງເຈົ້າ ເພື່ອເຈົ້າຈະມີອາຍຸໝັ້ນຍືນຢູ່ໃນແຜ່ນດິນທີ່ພຣະຜູ້ເປັນເຈົ້າຂອງເຈົ້າໄດ້ມອບໃຫ້.*

"ການໃຫ້ກຽດ"ແມ່ນຫຍັງ? ພາສາກຣີກສຳລັບການໃຫ້ກຽດໝາຍຄວາມວ່າ "ໃຫ້ຄຸນຄ່າສູງ, ຍົກໄວ້ທີ່ສູງສຸດ." ສິ່ງນີ້ຖືຈິງຈັງໃນທຸກໆຍຸກສມັຍ. ອາດຈະມີຄວາມບໍ່ເຫັນພ້ອມຕາມຍຸກສມັຍເມື່ອລູກບໍ່ຟັງຄວາມພໍ່ແມ່, ແຕ່ລູກຈະບໍ່ເຖິງຍຸກສມັຍທີ່ເຂົາຈະພົ້ນໜີ້ບຸນຄຸນກຽດຂອງພໍ່ແມ່ຈັກເທື່ອ. ພຣະເຈົ້າໄດ້ຕຣັດໄວ້ຢ່າງຈະແຈ້ງແລ້ວວ່າການໃຫ້ກຽດແລະນັບຖືເປັນປັດຈັຍສຳຄັນໃນແຕ່ລະເຮືອນ. ພຣະເຈົ້າຈິງຈັງກັບການໃຫ້ກຽດພໍ່ແມ່ເພາະວ່າພຣະເຈົ້າເຂົ້າໃຈພາບລວມທັງໝົດ. ພຣະອົງຮູ້ວ່າມັນບໍ່ແມ່ນພຽງແຕ່ກ່ຽວກັບການມີວັນດີຫຼືບ້ານສງົບສຸກເທົ່ານັ້ນ; ການໃຫ້ກຽດຜູກພັນກັບການບັນລຸເຖິງອານາຈັກຂອງພຣະອົງໃນໂລກນີ້.

ທຸກວັນນີ້ມັນເໝືອນເປັນເຣື່ອງທັມດາໃນການຈົ່ມວ່າບັນຫາແລະທາງທີ່ທ່ານປະພຶດຕໍ່ພໍ່ແມ່. ມັນເຕືອນຂ້າພະເຈົ້າໃນເຣື່ອງສອງອ້າຍນ້ອງຜູ້ຊຶ່ງໄດ້ເຂົ້າຮັບການແນະນຳຕັກເຕືອນນຳກັນ. ພວກເຂົາເຕີບໃຫຍ່ຂຶ້ນໃນຄອບຄົວພໍ່ຂີ້ເຫຼົ້າ. ອ້າຍໄດ້ກາຍເປັນຄົນຂີ້ເຫຼົ້າເໝືອນກັນ,

ແຕ່ນ້ອງຊາຍບໍ່ດື່ມເຫຼົ້າຈັກດີ້.ໃນເມື່ອຖືກຖາມໃຫ້ອະທິບາຍການປະພຶດຂອງເຂົາ, ເຂົາ*ເວົ້າເປັນສຽງດຽວກັນວ່າ, "ເອີ ທ່ານຈະຄາດຫວັງຫຍັງກັບຄົນຢ່າງພໍ່ຂ້ອຍ?* ທັງສອງເວົ້າຄວາມຈິງ: ຜູ້ນຶ່ງຕາມຮອຍເສເພຂອງພໍ່, ເຖິງແມ່ນລາວໄດ້ຊີມລົດຊາດແລ້ວລາວກໍຍັງເຮັດຢູ່, ແຕ່ຜູ້ເປັນນ້ອງປັກໃຈຢູ່ກັບການຫາທາງຫຼີກຈາກຈຸດຈົບຄືພໍ່. ເຣື່ອງນີ້ເປັນຄະຕິເຕືອນໃຈວ່າເຮົາອາດຕຳນິພໍ່ແມ່ຫຼາຍໂພດ-ຈຶ່ງໄດ້ຮັບການຍົກຍ້ອງພຽງເລັກນ້ອຍ.

| |
|---|
| *ມີທາງໃດແດ່ທີ່ພວກເຮົາສະແດງການໃຫ້ກຽດພໍ່ແມ່ເຮົາ?* |

ສະນັ້ນພວກເຮົາຈະໃຫ້ກຽດພໍ່ແມ່ເຮົາຈັ່ງໃດ? ຂ້າພະເຈົ້າຂໍແນະນຳການໃຫ້ກຽດບາງປະເພດດັ່ງນີ້:

1. **ການໃຫ້ກຽດດ້ວຍອາຣົມ.** ພວກເຮົາໃຫ້ກຽດພໍ່ແມ່ດ້ວຍການໃຊ້ເວລາກັບເພິ່ນ. ພໍ່ແມ່ບາງຄົນກິນບຳນານຢູ່ບ້ານ ແລະສູນດູແລແລະຂາດການໃຫ້ກຽດຈາກລູກໆທີ່ໃຫຍ່ແລ້ວ. ບາງຄົນອາດເວົ້າວ່າ, "ເຈົ້າບໍ່ຮູ້ຈັກແມ່ຂ້ອຍດີ. ລາວເປັນແມ່ຮ້າຍແຮງຫຼາຍ," ຫຼືເວົ້າວ່າ "ພໍ່ຂອງຂ້ອຍເປັນຂ່າວຮ້າຍ." ເຖິງຢ່າງໃດກໍຕາມ, ພໍ່ຫຼືແມ່ກໍຍັງເປັນພໍ່ແມ່ຂອງທ່ານ, ແລະຂໍ້ບັນຍັດຈຶ່ງໃຫ້ກຽດພໍ່ແມ່ມາຈາກພຣະເຈົ້າເອງ.
2. **ການໃຫ້ກຽດດ້ວຍປາກ.** ເມື່ອຂ້າພະເຈົ້າເມືອຮອດບ້ານຂ້າພະເຈົ້າບໍ່ໄດ້ເວົ້າໃຫ້ພໍ່ວ່າ, "ເຮ..ອາດຍາ. ຈັ່ງໃດ?" ມີແຕ່ "ໂດຍ, ຂ້ານ້ອຍ" ແລະ "ບໍ່, ຂ້ານ້ອຍ." ບໍ່ວ່າພໍ່ຫຼືແມ່ຈະຜິດຈະຖືກ, ພວກເຮົາກໍຕ້ອງໄດ້ເວົ້າດ້ວຍຄວາມໂຄຣົບ. ດັ່ງທີ່ທ່ານໂປໂລໄດ້ບອກຕີໂມທຽວວ່າ, *"ຢ່າໃສ່ຄຳຫຍາບໃນການຕັກເຕືອນຊາຍຜູ້ມີອາວຸໂສແຕ່ຈົ່ງຂໍຮ້ອງເໝືອນເພິ່ນເປັນພໍ່" (1 ຕມທ 5:1).* ພວກເຮົາຄວນເວົ້າເຣື່ອງພໍ່ແມ່ຂອງເຮົາດ້ວຍການໃຫ້ກຽດເໝືອນກັນ.
3. **ການໃຫ້ກຽດດ້ວຍເງິນຄຳ.** ໃນ 1 ຕມທ 5:8, ທ່ານໂປໂລຂຽນວ່າ,*"ຖ້າຜູ້ໃດບໍ່ລ້ຽງດູຍາດພີ່ນ້ອງຂອງຕົນເປັນຕົ້ນວ່າໃນຄອບຄົວຂອງຕົນຜູ້ນັ້ນກໍໄດ້ປະຕິເສດພຣະສາສນາເສັຽແລ້ວ ແລະແຮ່ງຊົ່ວກວ່າຄົນທີ່ບໍ່ເຊື່ອເສັຽອີກ. "ແລ້ວໃນຂໍ້16, ທ່ານໂປໂລຂຽນວ່າ, "ຖ້າຍິງຜູ້ມີຄວາມເຊື່ອຄົນໃດມີພີ່ນ້ອງເປັນແມ່ໝ້າຍ ກໍໃຫ້ເພິ່ນຊ່ອຍລ້ຽງດູຢ່າໃຫ້ເປັນພາຣະຂອງຄຣິສຕະຈັກ."* ການໃຫ້ກຽດພໍ່ແມ່ໝາຍເຖິງພວກເຮົາຕ້ອງຮັບຜິດຊອບດ້ານການເງິນຂອງເພິ່ນໃນເມື່ອເພິ່ນຊ່ອຍຕົນເອງບໍ່ໄດ້. ໝາຍຄວາມວ່າຈຶ່ງດູແລຄວາມສຸກທຸກຂອງເພິ່ນຍາມເພິ່ນຕ້ອງການຄວາມຊ່ອຍເຫຼືອ.

## 2. <u>2 ຊາມູເອນ 15:7-12</u>.

*7 ຈາກນັ້ນມາໄດ້ສີ່ປີ ອັບຊາໂລມໄດ້ກາບທູນເຈົ້າຊີວິດວ່າ "ຂ້າແດ່ສະເດັດພໍ່ ຂໍຊົງອະນຸຍາດໃຫ້ຂ້ານ້ອຍໄປເມືອງເຮັບໂຣນແດ່ທ້ອນ 8 ເພາະຂ້ານ້ອຍຢາກໄປແກ້ບະທີ່ໄດ້ສັນຍາໄວ້ກັບພຣະຜູ້ເປັນເຈົ້າຄືຕອນທີ່ຂ້ານ້ອຍຢູ່ໃນເມືອງກູເຊທີ່ເຂດອາຣັມ ຂ້ານ້ອຍໄດ້ສັນຍາຕໍ່ພຣະຜູ້ເປັນເຈົ້າວ່າ ຄັນຖ້າພຣະອົງຊົງໃຫ້ຂ້ານ້ອຍກັບຄືນເມືອນະຄອນເຢຣູຊາເລັມຂ້ານ້ອຍຈະນະມັສການພຣະອົງທີ່ ເຮັບໂຣນ." 9 ແລ້ວເຈົ້າຊີວິດກໍຕອບວ່າ "ຈົ່ງໄປດີເດີ" ດັ່ງນັ້ນອັບຊາໂລມກໍມຸ່ງໜ້າໄປເມືອງເຮັບໂຣນ 10 ແຕ່ລາວໄດ້ໃຊ້ຜູ້ສົ່ງຂ່າວໄປບອກທຸກໆຕະກຸນອິສຣາເອນວ່າ "ອັບຊາໂລມໄດ້ເປັນເຈົ້າຊີວິດແຫ່ງເມືອງເຮັບໂຣນແລ້ວ" 11 ອັບຊາໂລມໄດ້ເຊີນເອົາຊາຍສອງຮ້ອຍຄົນຈາກນະຄອນເຢຣູຊາເລັມ ເດີນທາງຮ່ວມໄປນຳ ພວກເຫຼົ່ານີ້ໄປດ້ວຍຄວາມຊື່ສັດໂດຍທີ່ບໍ່ຮູ້ຈັກກົນອຸບາຍຢ່າງໃດໝົດ 12 ໃນເວລາທີ່ອັບຊາໂລມຖວາຍເຄື່ອງບູຊາຢູ່ນັ້ນລາວໄດ້ສົ່ງຄົນໄປນຳເອົາ ອາກີໂຕເຟັນ ທີ່ປຶກສາຂອງກະສັດດາວິດທີ່ເມືອງກີໂລ ແຜນການກະບົດຕໍ່ຕ້ານເຈົ້າຊີວິດກໍເພີ້ມທະວີຂຶ້ນ ພວກທີ່ຕິດຕາມອັບຊາໂລມ ກໍເພີ້ມຈຳນວນຂຶ້ນເລື້ອຍໆ.*

| |
|---|
| *ໃນທາງໃດແດ່ທີ່ວັທນາທັມພວກເຮົາສະແດງການບໍ່ໃຫ້ກຽດພໍ່ແມ່?* |

ເພື່ອເພີ່ມຄວາມເຂົ້າໃຈໃນການໃຫ້ກຽດພໍ່ແມ່, ພວກເຮົາມາເບິ່ງບົດບັນທຶກທີ່ໜ້າເສົ້າໃນຂໍ້ພຣະທັມ. ພວກເຮົາມາວິເຄາະຊີວິດແລະບຸຄລິກຂອງລູກດາວິດ ອັບຊາໂລມ ເພາະເປັນຕົວຢ່າງທີ່ພວກເຮົາບໍ່ຄວນທຳຕາມ.

ອັບຊາໂລມເປັນລູກຜູ້ທີສາມຂອງດາວິດ. ລາວເກີດຈາກມະເຫສີຜູ້ທີສີ່ຊື່ ມາອາກາຊາວກູເຊ (2 ຊມອ 3:3). ການສົມຣົດນີ້ມີຮາກເຫງົ້າມາຈາກຜົນປໂຍດທາງການເມືອງຫຼາຍກວ່າສເນຫາຫຼືຄວາມຮັກ. ມາອາກາເປັນລູກສາວຂອງກະສັດຕານໄມແຫ່ງກູເຊ. ຄວາມຈິງແລ້ວ ການສົມຣົດຂອງດາວິດມີຜົນເນື່ອງມາຈາກເຫດຜົນທາງດ້ານການເມືອງເປັນຫຼັກ. ບໍ່ສົງສັຍເລີຍວ່ານີ້ໄດ້ສ້າງສູນຍາກາດແຫ່ງຄວາມອິດສາແລະການຕໍ່ສູ້ກັນພາຍໃນຄອບຄົວ.

ດາວິດບໍ່ໄດ້ເປັນສາມີທີ່ສົມບູນແບບ. ແລະກໍບໍ່ໄດ້ເປັນພໍ່ທີ່ຊື່ຕົງ. ຄວາມບາບແລະຄວາມບໍ່ສົມບູນແບບຂອງດາວິດ, ບໍ່ໄດ້ເປັນຂໍ້ແກ້ໃຫ້ແກ່ການປະພຶດຂອງອັບຊາໂລມ. ອັບຊາໂລມຍັງຕ້ອງໄດ້ຮັບຜິດຊອບໃນການໃຫ້ກຽດດາວິດໃນຖານະທີ່ເປັນທັງພໍ່ແລະກະສັດ. ອັບຊາໂລມກັບໃຫ້ກຽດຕົວເອງແທນທີ່ຈະໃຫ້ກຽດພໍ່. ຫຼັງຈາກກັບມາແຕ່ຖືກເນຣະເທດຍ້ອນຂ້ານ້ອງຕ່າງມານດາຊື່ອຳໂນນ, ອັບຊາໂລມຊອກຫາທາງຂຶ້ນຄອງຣາດແທນພໍ່ຂອງລາວໃນຖານະກະສັດຂອງອິສຣາເອນ. ອັບຊາໂລມມີຊື່ສຽງດັງແລະໄດ້ຮັບຄວາມນິຍົມດ້ວຍຄຳຫຼອກລວງແລະຄວາມບໍ່ສັດຊື່ທີ່ລາວພະຍາຍາມເອົາຊະນະໃຈແລະຄວາມພັກດີຂອງປະຊາຊົນ.

ພວກເຮົາເຫັນຢູ່ນີ້ ອັບຊາໂລມທຳລາຍຊື່ສຽງພໍ່ຂອງລາວດ້ວຍການຕົວະ: ລາວໄດ້ບອກພໍ່ວ່າລາວຈະໄປເຮັບໂຣນເພື່ອຖວາຍບູຊາ. ທີ່ຈິງອັບຊາໂລມໄປເຄື່ອນໄຫວດ້ວຍການຖວາຍບູຊາ, ແຕ່ເຈຕນາອັນແທ້ຈິງແລ້ວລາວໄປອາສັຍບ່ອນປອດພັຍສຳລັບປະກາດວ່າຕົນກາຍເປັນກະສັດ. ພວກເຮົາບໍ່ສາມາດໃຫ້ກຽດພໍ່ແມ່ຂອງເຮົາໃນເມື່ອບໍ່ມີຄວາມສັດຊື່ໃນການທີ່ເຮົາເວົ້ານຳເພິ່ນແລະເວົ້າເຣື່ອງເພິ່ນ. ອັບຊາໂລມໄດ້ໃຫ້ຕົວຢ່າງ, ສະແດງໃຫ້ເຮົາເຫັນຜົນກັມສນອງເມື່ອພວກເຮົາຂາດການໃຫ້ກຽດ. ພຶດຕິກັມການທຳລາຍກຽດຂອງອັບຊາໂລມນຳຄວາມຂັດແຍ້ງຂອງຄອບຄົວມາສູ່ປະເທດອິສຣາເອນ-ແລະ ນຳຄວາມຕາຍມາສູ່ລາວເອງ.

### 3. <u>2 ຊາມູເອນ 15:13-14</u>.

*13 ຜູ້ນຳຂ່າວໄດ້ມາລາຍງານຕໍ່ດາວິດວ່າ "ພວກອິສຣາເອນໄດ້ຕິດຕາມອັບຊາໂລມ ແລະ ໄດ້ສະແດງຄວາມຈົງຮັກ*
*ພັກດີຕໍ່ລາວແລ້ວ." 14ດາວິດຈຶ່ງເຕົ້າໂຮມພວກຂ້າຣາຊການທີ່ຢູ່ໃນນະຄອນເຢຣູຊາເລັມແລະຮັບສັ່ງວ່າ "ຖ້າພວກ*
*ເຮົາຢາກລອດພົ້ນຈາກມືຂອງອັບຊາໂລມ ພວກເຮົາຕ້ອງພາກັນໜີໄປດຽວນີ້ອີກບໍ່ດົນລາວກໍຈະມາບ່ອນນີ້ພວກ*
*ເຮົາຈະເສັຽໄຊໃຫ້ລາວ ແລະລາວຈະຂ້າທຸກໆຄົນໃນເມືອງນີ້."*

ອັບຊາໂລມຕັ້ງຕົວເປັນກະສັດສຳເລັດຜົນ. ລາວມີຊື່ສຽງ, ແລະຄົນຂອງກະສັດດາວິດຜູ້ນຶ່ງກໍໄດ້ເຂົ້າຮ່ວມລາວ. "ຫົວໃຈຂອງຜູ້ຊາຍທັງຫຼາຍກໍຢູ່ກັບອັບຊາໂລມແລ້ວ" (ຂໍ້13). ຖ້ານີ້ແມ່ນການເລືອກຕັ້ງ, ກໍໝາຍຄວາມວ່າກະສັດດາວິດຕ້ອງໄດ້ລົງຈາກຕຳແໜ່ງແລະໃຫ້ອັບຊາໂລມຄອງຕຳແໜ່ງຊຶ່ງລາວຊະນະໂດຍຄະແນນສຽງຂອງປະຊາຊົນ. ແຕ່ການຜ່າຍແພ້ຕາມທຳນຽມນີ້ໝາຍເຖິງຕາຍ. ກະສັດດາວິດຢ້ານກົວຕົວເອງແລະປະຊາຊົນຈະຕາຍຕໍ່ສະຖານະການທີ່ອັບຊາໂລມມີກຳລັງພົນສນັບສນູນຢ່າງໜາແໜ້ນ.

ກະສັດດາວິດຊາບເຖິງການທຳລາຍກຽດຂອງອັບຊາໂລມເລິກພຽງໃດ. ເພິ່ນຮູ້ວ່າອັບຊາໂລມຄົງບໍ່ໄວ້ຊີວິດເພິ່ນເພາະຖານະເປັນພໍ່ເທົ່ານັ້ນ. ອັບຊາໂລມບໍ່ໄດ້ສົນໃຈຄວາມສຸກທຸກຂອງພໍ່ນອກຈາກຕົວລາວເອງ. ການທຳລາຍກຽດສັກສີຜູ້ເປັນພໍ່ຂອງອັບຊາໂລມ, ດາວິດ, ລາວໄດ້ຮັບຜົນກັມຄືຊີວິດ. ການທໍຣະຍົດຕາມລ່າໂຄ່ນລົ້ມພໍ່ຂອງລາວເປັນສາເຫດໃຫ້ລາວຕ້ອງເຖິງແກ່ຄວາມຕາຍ.ໂຢອາບເວົ້າຂຶ້ນວ່າ, *"ຂ້ອຍຈະບໍ່ຍອມເສັຽເວລາເວົ້າກັບເຈົ້າດອກ"* ໃນຂນະ

*ທີ່ອັບຊາໂລມຍັງມີຊີວິດ ແລະແຂວນຢູ່ຕົ້ນກໍ່ນັ້ນ ໂຢອາບກໍຖອນຫອກຂອງຕົນສາມດວງແທງໜ້າອົກຂອງລາວ ແລະທະຫານຂອງໂຢອາບສິບຄົນກໍເຂົ້າໄປຂ້າອັບຊາໂລມ (2 ຊາມູເອນ 18:14-15).*
ອັບຊາໂລມຕ້ອງຮັບຜິດຊອບຕໍ່ການທໍລະຍົດເຕັມໆ. ໃນທີ່ສຸດ, ດາວິດ, ດ້ວຍຄວາມປານີ, ຄົງໄດ້ບອກໃຫ້ອັບຊາໂລມໃຫ້ກຽດພໍ່ແລະເຈົ້າຊີວິດຂອງລາວ. ການທຳລາຍກຽດມັກວົນວຽນຢູ່ໃນຄວາມສັມພັນຂອງເຮົາຕລອດ, ທີ່ສຳຄັນຊຶ່ງເຮົາຄວນຮັກສາສັກສີເອົາໄວ້ ໃນທຸກແງ່ມູມຂອງຊີວິດເຮົາ. ເມື່ອເຮົາໄດ້ເຮັດບາບ, ເຮົາຕ້ອງສແວງຫາພຣະເຈົ້າ ແລະຄວາມເມດຕາຂອງພຣະອົງ.

| |
|---|
| ***ຄວາມປາຖນາໃຫ້ກຽດພໍ່ແມ່ຂອງທ່ານມີຜົນຕໍ່ການຕັດສິນໃຈຂອງທ່ານຢ່າງໃດ?*** |

ຖ້າພໍ່ແມ່ຂອງທ່ານຍາກທີ່ຈະໃຫ້ກຽດຈະເປັນຈັ່ງໃດ? ຖ້າພວກເພິ່ນໄດ້ປະມູນເຊື້ອການທຳລາຍໄວ້ໃນໃຈຂອງເຮົາ ບໍ່ວ່າທາງດ້ານການທໍຣະຍົດ, ຄວາມຂົມຂື່ນ, ການກະທຳອື່ນໃດມາກມາຍ, ພວກເຮົາຕ້ອງກັບຄືນຫາຈິດໃຈພຣະຄັມພີທີ່ພຣະເຈົ້າໄດ້ຮຽກຮ້ອງເຮົາໃຫ້ກຽດພວກເພິ່ນ.

ທາງນຶ່ງທີ່ພວກເຮົາສາມາດຊ່ອຍລູກໃຫ້ກຽດເຮົາແມ່ນດ້ວຍການໃຫ້ກຽດເຂົາ. ພວກເຮົາທຳໄດ້ດ້ວຍການເສັຽສລະເພື່ອເຂົາເມື່ອເຮົາລົ້ມເຫຼວໃນການຊອກແກ້ໄຂສະຖານະການໃດນຶ່ງ. ການສາຣະພາບ, ຄວາມສັດຊື່, ແລະຄວາມຖ່ອງທັມໃນພາກສ່ວນຂອງເຮົາຈະສົ່ງຜົນໃຫ້ມີການດຳເນີນຊີວິດທີ່ໃຫ້ກຽດ.

| |
|---|
| ***ມີຜູ້ໃດທີ່ທ່ານເຫັນຄວາມສັມພັນພໍ່ແມ່-ລູກເປັນການຖວາຍກຽດແດ່ພຣະເຈົ້າ?*** |

## <u>ນຳໃຊ້ໃນຊີວິດ</u>

ທ່ານຈະສແວງຫາການເປັນຄົນໃຫ້ກຽດພໍ່ແມ່ຢ່າງໃດ? ຈົ່ງເລືອກການນຳໃຊ້ຂໍ້ນຶ່ງຕໍ່ລົງໄປນີ້:

- **ກັບໃຈ.** ພວກເຮົາທຸກຄົນພາດບໍ່ວ່າທາງໃດກໍທາງນຶ່ງເມື່ອມາເຖິງການສະແດງການໃຫ້ກຽດພໍ່ແມ່ຫຼືດຳເນີນຊີວິດທີ່ໃຫ້ກຽດເພື່ອລູກຂອງເຮົາຈະໃຫ້ກຽດເຮົາ. ຈົ່ງສາຣະພາບແລະກັບໃຈຈາກບາບທີ່ເຮັດໃຫ້ເສັຽກຽດທີ່ທ່ານມີຫຼືໄດ້ກະທຳຊຶ່ງພາໃຫ້ລູກໃຫ້ກຽດທ່ານຍາກລຳບາກ.
- **ເປັນແບບຢ່າງ.** ຈົ່ງທຳຕົວໃຫ້ເປັນແບບຢ່າງໃນຄວາມຈິງໃຈແລະຄວາມສັດຊື່ຕໍ່ໜ້າທຸກຄົນຄື: ລູກ, ຫຼານ, ແລະລູກຫຼານຂອງຄົນອື່ນ.
- **ຈົ່ງກະທຳ.** ຈົ່ງເຜີຍແຜ່ບຸຄລິກການໃຫ້ກຽດຢ່າງຈິງຈັງອອກໄປ. ຈົ່ງເຮັດບາງສິ່ງບາງຢ່າງຊວ້ານຊູພໍ່ແມ່. ຂຽນຈົດໝາຍ. ເຖິງແມ່ນພໍ່ແມ່ຂອງທ່ານເສັຽຊີວິດແລ້ວກໍຕາມ, ພວກທ່ານກໍຍັງສາມາດສະແດງການໃຫ້ກຽດພວກເພິ່ນໄດ້ດ້ວຍວິທີການເວົ້າເຣື່ອງດີຂອງພວກເພິ່ນ. ນີ້ຖ້າເປັນທ່ານ, ຈົ່ງແບ່ງປັນແກ່ຜູ້ໃດຜູ້ນຶ່ງເຖິງບົດບາດພໍ່ແມ່ຂອງທ່ານທີ່ໄດ້ກະທຳໃນຊີວິດທ່ານແລະພຣະເຈົ້າໄດ້ໃຊ້ພຶດຕິກັມເຫຼົ່ານີ້ສ້າງທ່ານໃຫ້ທ່ານກາຍມາເປັນຄົນທີ່ທ່ານເປັນຢູ່ໃນທຸກວັນນີ້.

ບໍ່ວ່າປັວັດຄອບຄົວຂອງທ່ານຈະເປັນມາຢ່າງໃດກໍຕາມ, ຂ້າພະເຈົ້າຂໍໜູນໃຈໃຫ້ທ່ານເລືອກທາງແຫ່ງຄວາມຮັກ, ໂຄຣົບ, ແລະໃຫ້ກຽດນັບຕັ້ງແຕ່ວັນນີ້ເປັນຕົ້ນໄປ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**